ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ

ສຳນັກງານ ຄຄຊ

ເລກທີ 61 /ສຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 29 DEC 2021

# ແຈ້ງການ

**ເຖິງ:** ທ່ານ ຜູ້ອຳນວຍການ ບໍລິສັດກວດສອບ ດີລອຍ (Deloitte) ຈຳກັດ ທີ່ນັບຖື,

**ເລື່ອງ:** ຖອນໃບຮັບຮອງ ບໍລິສັດກວດສອບ ແລະ ນັກກວດສອບ.

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ເລກທີ 79/ສພຊ ລົງວັນທີ 3 ທັນວາ 2019;
- ອີງຕາມຂໍ້ຕົກລົງວ່າດ້ວຍການຮັບຮອງບໍລິສັດກວດສອບ (ສະບັບປັບປຸງ) ເລກທີ 26/ຄຄຊ ລົງວັນທີ 03 ກັນຍາ 2021;
- ອີງຕາມໜັງສືສະເໜີຂອງບໍລິສັດກວດສອບດີລອຍ (Deloitte) ຈຳກັດ ເລກທີ 036/ດລ/2021 ລົງວັນທີ 17 ທັນວາ 2021.

ສຳນັກງານ ຄຄຊ ຂໍຖືເປັນກຽດແຈ້ງມາຍັງທ່ານ ກ່ຽວກັບ ການສະເໜີຂໍໂຈະການຕໍ່ໃບຮັບຮອງບໍລິສັດກວດສອບໃນວຽກງານຫຼັກຊັບຂອງບໍລິສັດກວດສອບດີລອຍ (Deloitte) ຈຳກັດ ອີງຕາມໜັງສືສະເໜີ ເລກທີ 036/ດລ/2021 ລົງວັນທີ 17 ທັນວາ 2021 ໂດຍອີງຕາມກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ເລກທີ 79/ສພຊ ລົງວັນທີ 3 ທັນວາ 2019 ແລະ ຂໍ້ຕົກລົງວ່າດ້ວຍການຮັບຮອງບໍລິສັດກວດສອບ (ສະບັບປັບປຸງ) ເລກທີ 26/ຄຄຊ ລົງວັນທີ 03 ກັນຍາ 2021 ເຫັນວ່າ ການສະເໜີດັ່ງກ່າວ ຕົກກໍລະນີ ການຖອນໃບຮັບຮອງຕາມການຮ້ອງຂໍ ແລະ ດ້ວຍຄວາມສະໝັກໃຈຂອງບໍລິສັດ ແລະ ທາງບໍລິສັດ ບໍ່ໄດ້ຕໍ່ໃບຮັບຮອງ ແລະ ນັກກວດສອບ ທີ່ກາຍກຳນົດຕໍ່ອາຍຸໃບຮັບຮອງມາແລ້ວ (ວັນໝົດອາຍຸແມ່ນວັນທີ 17 ກັນຍາ 2021). ສະນັ້ນ, ສຳນັກງານ ຄຄຊ ຈຶ່ງຂໍຖອນໃບຮັບຮອງບໍລິສັດ ແລະ ນັກກວດສອບ ຂອງບໍລິສັດກວດສອບ ດີລອຍ (Deloitte) ຈຳກັດ ຕາມການສະເໜີຂອງບໍລິສັດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ໃນອານາຄົດ ຖ້າບໍລິສັດ ຕ້ອງການສະເໜີຂໍການຮັບຮອງມາເຄື່ອນໄຫວໃນວຽກງານຫຼັກຊັບຄືນໃໝ່ ສຳນັກງານ ຄຄຊ ກໍ່ຍິນດີຄົ້ນຄວ້າພິຈາລະນາຕາມລະບຽບການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ກະລຸນານຳສົ່ງໃບຮັບຮອງບໍລິສັດ ແລະ ນັກກວດສອບຄືນໃຫ້ສຳນັກງານ ຄຄຊ ພາຍໃນ 3 ວັນລັດຖະການນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ເຊັນແທນຫົວໜ້າສຳນັກງານ ຄຄຊ**

**ຮອງຫົວໜ້າສຳນັກງານ ຄຄຊ**

ຄະນະກຳມະການຄຸ້ມຄອງຫຼັກຊັບ

ສຳນັກງານ ຄຄຊ

**ສຸອອສະຫວາດ ທິລະກຸນ**

Scanned with CamScanner